ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ /ກສ
ນະຄອນຫຼວງວຽງຈັນ, ວັນທີ ທັນວາ 2019

ບົດລາຍງານ

ຮຽນ : ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມະການໂອແລມປິກ ແຫ່ງຊາດລາວ ທີ່ນັບຖືຢ່າງສູງ,

ເລື່ອງ : ຜົນສຳເລັດການເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 30 ທີ່ ປະເທດ ຟີລິບປິນ ແຕ່ວັນທີ 30/11/-12/12/2019.

ອີງຕາມ ໜັງສືແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 292/ຫສ.ນຍ, ລົງວັນທີ 13 ມິຖຸນາ 2019;
ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບ ເລກທີ 7449/ສສກ, ລົງວັນທີ 18 ພະຈິກ 2019.

I. ສະພາບລວມ :

ງານມະຫາກຳກິລາຊີເກມ (ຊື່ເຕັມເປັນພາສາອັງກິດ South-East Asian Games; ຊື່ຫຍໍ້ : SEA Games) ເປັນງານແຂ່ງຂັນກິລາໃນກຸ່ມປະເທດອານຸພາກພື້ນອາຊີຕາເວັນອອກສຽງໃຕ້, ເຊິ່ງ 2 ປີໃດຈັດຂຶ້ນເທື່ອໜຶ່ງ ໂດຍມີການສະເໜີຂອງປະເທດທີ່ເປັນສະມາຊິກ ພັດປ່ຽນກັນເປັນເຈົ້າພາບ, ປະເທດໃດຖືກຮັບຮອງເປັນເຈົ້າພາບຈະມີສິດສະເໜີເລືອກ ແລະ ກຳນົດເອົາປະເພດກິລາທີ່ປະເທດຕົນເອງໄດ້ປຽບໃນການຍາດເອົາຫຼຽນຄຳ ສະເໜີເຂົ້າແຂ່ງຂັນ.

ງານມະຫາກຳກິລາຊີເກມຄັ້ງທີ 30 ຢູ່ປະເທດຟີລິບປິນເຈົ້າພາບ ໄດ້ບັນຈຸປະເພດກິລາເຂົ້າແຂ່ງຂັນ ຈຳນວນ 56 ປະເພດ, ມີການຊິ່ງຫຼຽນຄຳ ທັງໝົດ 530 ລາຍການ ຊຶ່ງໃນຈຳນວນນີ້ປະກອບມີປະເພດກິລາໃນລາຍການຊີເກມ, ເອຊຽນເກມ, ໂອແລມປິກເກມ ແລະ ກິລາພື້ນເມືອງຂອງບາງປະເທດ.

ພາຍຫຼັງໄດ້ຮັບໜັງສືແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 292/ສຫນຍ, ກົມກິລາລະດັບສູງ ໄດ້ປະສານສົມທົບກັບ ຄະນະກຳມະການໂອແລມປິກແຫ່ງຊາດລາວ ແລະ ສະຫະພັນກິລາ ແຫ່ງຊາດ ປຶກສາຫາລືຄົ້ນຄວ້າ ຄັດເລືອກປະເພດກິລາສົ່ງເຂົ້າແຂ່ງຂັນ ແລະ ໄດ້ກຳນົດເອົາ 25 ປະເພດກິລາ ໂດຍໄດ້ ວາງຄາດໝາຍສຸ້ຊິນໃຫ້ໄດ້ 02 ຫຼຽນຄຳ. ຈຳນວນຄະນະນຳຄຸຝຶກ ແລະ ນັກກິລາລາວ ສົ່ງເຂົ້າຮ່ວມງານມະຫາກຳກິລາ ຊີເກມຄັ້ງທີ 30 ມີທັງໝົດ 370 ຄົນ, ເພື່ອເປັນການປະຢັດລາຍຈ່າຍງົບປະມານຂອງລັດ ຈຶ່ງໄດ້ແຍກປະເພດກິລາອອກ ເປັນ 2 ໝວດ ຄື :

Scanned with CamScanner

1. ໝວດກິລາບັງຄັບໃຊ້ງົບປະມານຂອງລັດຖະບານ ຈຳນວນ 18 ປະເພດ ຄື : ກິລາຄົນຍອກຊິ່ງ, ຢູໂດ, ລີດຖີບ, ເປຕັ້ງ, ມວຍລາວ, ມວຍປ້ຳ, ແລ່ນ-ລານ, ລອຍນ້ຳ, ຍິງທະນູ, ຈູ້ຊູ, ເທຄວັນໂດ, ກາຣາເຕໂດ, ຍົກນ້ຳໜັກ, ມວຍສາກົນ, ບິນລຽດ-ສະນຸກເກີ, ກະຕໍ້, ປັນຈັກສີລັດ, ແລະ ຜ່ານສິ່ງກີດຂວາງ.
2. ໝວດກິລາທີ່ກຸ້ມຕົນເອງ ລັດຖະບານຊ່ວຍເງິນແຮຖົງບຸກຄົນ, ຊຸດຈອມ ແລະ ຊຸດສອນສະໜາມ ຄື : ກິລາເທັນນິດ, ຊອບເທັນນິດ, ອິສະປອດ, ບານເຕະ, ກ໊ອຟ, ລັກບີ້.

- ຈຸດປະສົງຂອງການເຂົ້າຮ່ວມ :

1) ເພື່ອເຮັດໜ້າທີ່ການເມືອງກັບບັນດາປະເທດສະມາຊິກອາຊຽນດ້ວຍກັນ ໃນການເພີ່ມທະວີຄວາມສາມັກຄີ ມິດຕະພາບ ແລະ ການຮ່ວມມືຮອບດ້ານ;
2) ເພື່ອປະຕິບັດພັນທະໃນນາມເປັນສະມາຊິກຂອງອົງການຈັດຕັ້ງກິລາສາກົນ ແລະ ເພື່ອຊຸກຍູ້ສົ່ງເສີມພັດທະນາກິລາຊີເກມ ໃຫ້ນັບມື້ເຕີບໃຫ່ຍຂະຫຍາຍໂຕ, ທັງເປັນການສະໜັບສະໜຸນປະເທດເຈົ້າພາບໃຫ້ງານກິລາຊີເກມຄັ້ງນີ້ອຸດົມສົມບູນ ຟົດຟື້ນອະລັງການ;
3) ເພື່ອສະແດງອອກເຊິ່ງຄວາມອາດສາມາດທີ່ບົ່ມຊ້ອນສຸ້ຊົນຍາດເອົາຫຼຽນທີ່ມີຄຸນຄ່າມາໃຫ້ປະເທດຊາດ, ຍົກສູງຖານະບົດບາດກຽດຊື່ສຽງຂອງກິລາລາວໃຫ້ສູງເດັ່ນທຽບທັນກັບສາກົນ.

- ຕາຕະລາງສະຫຼຸບຫຼຽນທີ່ໄດ້ຮັບຂອງແຕ່ປະເທດເຂົ້າຮ່ວມແຂ່ງຂັນງານມະຫາກຳກິລາຊີເກມຄັ້ງທີ 30:

ລ/ດ	ປະເພດກິລາທີ່ໄດ້ຫຼຽນ	ຫຼຽນຄຳ	ຫຼຽນເງິນ	ຫຼຽນທອງ	ລວມ
1	ປະເທດຟີລິບປິນ	149	117	121	387
2	ປະເທດຫວຽດນາມ	98	85	105	288
3	ປະເທດໄທ	92	103	123	288
4	ປະເທດອິນໂດນີເຊຍ	72	84	111	267
5	ປະເທດມາເລເຊຍ	55	58	71	184
6	ປະເທດສິງກະໂປ	53	46	68	167
7	ປະເທດພະມ້າ	4	18	51	73
8	ປະເທດກຳປູເຈ	4	6	36	46
9	ປະເທດບຣູໄນ ດາລຸສລຳ	2	5	6	13
10	ປະເທດລາວ	1	5	29	35
11	ປະເທດຕິມໍເລສ	0	1	5	6

- ຜົນຂອງການເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງທີ 30 ທີ່ ປະເທດຟີລິບປິນ ນັກກິລາລາວສາມາດຍາດໄດ້ 1 ຫຼຽນຄຳ 5 ຫຼຽນເງິນ ແລະ 29 ຫຼຽນທອງ ລວມ 35 ຫຼຽນ ຈັດຢູ່ໃນອັນດັບທີ 10 ຈາກ 11 ປະເທດອາຊຽນຄື :

❖ ຫຼຽນຄຳ 1 ຫຼຽນ ໄດ້ຈາກ : ຄົນຍອກຊິ່ງ.
❖ ຫຼຽນເງິນ 5 ຫຼຽນ ໄດ້ຈາກກິລາ : ຢູໂດ 2 ຫຼຽນ, ມວຍ 1 ຫຼຽນ, ລີດຖີບ 1 ຫຼຽນ ແລະ ເປຕັ້ງ 1 ຫຼຽນ.

Scanned with CamScanner

❖ ຫຼຽນທອງ 29 ຫຼຽນ ໄດ້ຈາກກິລາ : ຄິກບອກຊິ່ງ 3 ຫຼຽນ, ຢູໂດ 1 ຫຼຽນ, ເປຕັ້ງ 3 ຫຼຽນ, ມວຍ 2 ຫຼຽນ, ປັນຈັກສີລັດ 3 ຫຼຽນ, ວູຊູ 3 ຫຼຽນ, ມວຍປ້ຳ 3 ຫຼຽນ, ກະຕໍ້ 2 ຫຼຽນ, ເທຄວັນໂດ 2 ຫຼຽນ, ຄາຣາເຕໂດ 2 ຫຼຽນ, ຜ່ານສິ່ງກີດຂວາງ 2 ຫຼຽນ, ແລ່ນ-ລານ 1 ຫຼຽນ, ສະນຸກເກີ 1 ຫຼຽນ, ຊອບເຫັນນິດ 1 ຫຼຽນ.

II. ຕີລາຄາຜົນສຳເລັດໃນການເຂົ້າຮ່ວມງານມະຫາກຳກິລາຊີເກມ ຄັ້ງທີ 30 ທີ່ປະເທດຟີລິບປິນ :

1. ດ້ານການເມືອງ :

- ໄດ້ເພີ່ມທະວີຜູກພັນຄວາມສາມັກຄີ ແລະ ສ້າງຄວາມເຂົ້າໃຈທີ່ດີມີຄວາມເຊື່ອໝັ້ນຂອງປະເທດສະມາຊິກອາຊຽນຕໍ່ ສປປ ລາວ;
ເປັນການໄດ້ຊຸກຍຸ້ໃຫ້ກຳລັງໃຈ ແລະ ສະໜັບສະໜຸນປະເທດເຈົ້າພາບເຮັດໃຫ້ການຈັດການແຂ່ງຂັນຊີເກມໃນຄັ້ງນີ້ປະສົບຜົນສຳເລັດຢ່າງຈົບງາມ;
ໄດ້ຍົກຖານະບົດບາດກຽດຊື່ສຽງຂອງປະເທດລາວສູງຂຶ້ນໃນເວທີສາກົນ ແລະ ເຮັດໃຫ້ປະເທດອື່ນໆ ໄດ້ຮັບຮູ້ ແລະ ເຂົ້າໃຈ ສປປ ລາວ ຢ່າງກວ້າງຂວາງ ທັງເປັນການໂຄສະນາເຜີຍແຜ່ສີລະປະ, ວັດທະນະທຳອັນດີງາມຂອງຊາດໃຫ້ຕ່າງປະເທດໄດ້ຮັບຮູ້.

2. ດ້ານວິຊາສະເພາະ :

- ການເຂົ້າຮ່ວມແຂ່ງຂັນຄັ້ງນີ້ສາມາດຕີລາຄາໄດ້ວ່າ ສປປ ລາວ ມີຜົນສຳເລັດຢ່າງໜ້າເພິ່ງພໍໃຈຖ້າທຽບໃສ່ສະພາບງົບປະມານຂອງປະເທດມີຄວາມຫຍຸ້ງຍາກ (ການອະນຸມັດງົບປະມານໃນນາທີສຸດທ້າຍ), ການກະກຽມມີໄລຍະສັ້ນເກີນໄປຖ້າທຽບໃສ່ບັນດາປະເທດອາຊຽນດ້ວຍກັນ, ແຕ່ສາມາດຍາດໄດ້ຫຼຽນທັງໝົດຈຳນວນ 35 ຫຼຽນ ລື່ນປີທີ່ຜ່ານມາ ຈຳນວນ 09 ຫຼຽນ (ຊີເກມຄັ້ງທີ 29 ຍາດໄດ້ 26 ຫຼຽນ ຄື : 02 ຫຼຽນຄຳ, 03 ຫຼຽນເງິນ ແລະ 21 ຫຼຽນທອງ). ທຽບໃສ່ຊີເກມຄັ້ງນີ້ ເຖິງວ່າຫຼຽນຄຳໄດ້ຫຼຸດຄາດໝາຍໜຶ່ງຫຼຽນ ແຕ່ປະເພດກິລາທັງໝົດທີ່ລາວເຮົາຍາດໄດ້ແມ່ນ ປະເພດກິລາທີ່ບັນຈຸຢູ່ໃນຊີເກມ, ເອຊຽນເກມ ແລະ ໂອແລມປິກເກມ ໂດຍສະເພາະ 01 ຫຼຽນຄຳຈາກກິລາຄິກບອກຊິ່ງເປັນປະເພດກິລາທີ່ມີຊື່ສຽງລະດັບໂລກ;
ຄະນະນຳ, ຄູຝຶກ ແລະ ນັກກິລາໄດ້ຕັ້ງໜ້າປະຕິບັດໜ້າທີ່ຂອງໃຜລາວຢ່າງສຸດຄວາມສາມາດ ໃນບັ້ນກະກຽມ ແລະ ບັ້ນເຂົ້າຮ່ວມການແຂ່ງຂັນ ເພື່ອຍາດແຍ່ງເອົາໄຊຊະນະ ນອກນັ້ນ ຍັງໄດ້ຮັບປະສົບການ ແລະ ບົດຮຽນອັນໃໝ່ທີ່ສາມາດນຳມາພັດທະນາຕົວເອງໃຫ້ທຽບເທົ່າກັບມາດຕະຖານສາກົນ;
ບຸກຄະລາກອນກິລາ ໂດຍສະເພາະແມ່ນຄະນະບໍລິຫານງານສະຫະພັນກິລາແຫ່ງຊາດ ແລະ ກຳມະການຕັດສິນກິລາຈຳນວນໜຶ່ງ ໄດ້ຖືກຄັດເລືອກເຂົ້າຮ່ວມເປັນກຳມະການໃນຄະນະກຳມະການຈັດການແຂ່ງຂັນນ້ຳປະເທດເຈົ້າພາບ ແລະ ມີບົດບາດໃນການປະຕິບັດໜ້າທີ່ເປັນກຳມະການຕັດສິນກິລາໃນລະດັບຂົງເຂດອະນຸພາກພື້ນຄັ້ງນີ້ໄດ້ເປັນຢ່າງດີ ຊຶ່ງຈະເປັນທ່າແຮງໃຫ້ກັບການພັດທະນານັກກິລາຂອງລາວໃນອານາຄົດ.

III. ສາເຫດທີ່ພາໃຫ້ມີຜົນສຳເລັດຍ້ອນ :

- ໄດ້ຮັບຄວາມເອົາໃຈໃສ່ຊີ້ນຳ ນຳພາຈາກກະຊວງສຶກສາທິການ ແລະ ກິລາເປັນຢ່າງດີ ແລະ ໄດ້ຮັບການອຸດໜູນຈາກກະຊວງການເງິນ, ກະຊວງການຕ່າງປະເທດ, ບັນດາກົມອ້ອມຂ້າງກະຊວງ, ສະຖານເອກອັກຄະຣັດຖະທູດລາວປະຈຳເມືອງມານີລາ, ຄະນະກຳມະການໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ ແລະ ອົງການຈັດຕັ້ງສາກົນ;

Scanned with CamScanner

- ລັດຖະບານໄດ້ໃຫ້ຄວາມສຳຄັນ ແລະ ສະໜອງງົບປະມານຮັບໃຊ້ໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນຕາມການສະເໜີ;
- ມີການຈັດຕັ້ງ ແລະ ແບ່ງງານ ແບ່ງຄວາມຮັບຜິດຊອບກັນຢ່າງເປັນລະບົບ, ມີຍຸດທະສາດໃນການວາງແຜນການໃນຍັ້ນກະກຽມ ແລະ ບັ້ນແຂ່ງຂັນ;
ຫຼາຍສະຫະພັນກິລາແຫ່ງຊາດ, ຄູຝຶກ ແລະ ນັກກິລາໄດ້ຕັ້ງໜ້າ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍດ້ວຍຄວາມຮັບຜິດຊອບສູງ ແລະ ບາງບັ້ນດາສະຫະພັນກິລາແຫ່ງຊາດ ຍັງມີຄວາມກະຕືລືລົ້ນຂໍນຂວາຍຫາທຶນຮອນຈາກພາກສ່ວນອື່ນ ແລະ ປະກອບສ່ວນສົມທົບກັບງົບປະມານລັດ ແກ້ໄຂເງິນຝຶກແອບໃຫ້ແກ່ນັກກິລາ;
ຄອບຄົວໄດ້ສົ່ງເສີມໃຫ້ການຊຸກຍູ້ລຸກຫຼານເປັນພິເສດທັ້ງເວລາ ແລະ ຊັບສິນສ່ວນຕົວ ດ້ວຍຄວາມເສຍສະລະສູງ;
- ສະຖາບັນການສຶກສາຈຳນວນໜຶ່ງໄດ້ເອົາໃຈໃສ່ສະໜັບສະໜຸນໃນການອະນຸຍາດການລາພັກຮຽນ ແລະ ການສິດສອນເພີ່ມໃຫ້ນັກກິລາໃນໄລຍະຮັບໃຊ້ຊາດ.

IV. <u>ບົດຮຽນທີ່ຖອດຖອນໄດ້ ແລະ ສິ່ງທ້າທາຍ</u> :

1. <u>ບົດຮຽນທີ່ຖອດຖອນໄດ້</u> :
   - ການກະກຽມ ແລະ ການເກັບຕົວນັກກິລາລາວເຮົາເຂົ້າສຸນຝຶກແອບ ໃຊ້ໄລຍະເວລາສັ້ນເກີນໄປ, ແຕ່ລະປະເພດກິລາເຂົ້າສຸນຝຶກແອບໃຊ້ເວລາພຽງ 2-3 ເດືອນ, ຖ້າທຽບໃສ່ກັບບັ້ນດາປະເທດອື່ນ ໃຊ້ເວລາຢ່າງໜ້ອຍ 6 ຫາ 8 ເດືອນ;
   ໃນໄລຍະການກະກຽມກ່ອນການເກັບຕົວຝຶກແອບນັກກິລາ ມີຄວາມຈຳເປັນຈະຕ້ອງຈັດກິດຈະກຳແຂ່ງຂັນຄັດເລືອກຄັກແນ່ ແລະ ສົ່ງນັກກິລາໄປຝຶກແອບ, ເຂົ້າຮ່ວມແຂ່ງຂັນທົດສອບຢູ່ຕ່າງປະເທດ ຕ້ອງເຮັດຕໍ່ເນື່ອງ ແລະ ການຈັດຈ້າງຄູຝຶກທີ່ໄດ້ມາດຕະຖານສາກົນໃຫ້ມີໄລຍະເວລາ 6 ເດືອນຂຶ້ນໄປ;
   ຈະຕ້ອງຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄະລາກອນກິລາຂອງ ສປປ ລາວ ໄດ້ປະຕິບັດໜ້າທີ່ຢູ່ບັ້ນດາສະຫະພັນກິລາສາກົນ;
   ຄວນຂຶ້ນງົບປະມານເສີມໃນໄລຍະເຂົ້າຮ່ວມແຂ່ງຂັນ ຊຶ່ງບາງປະເທດເຈົ້າພາບສະໜອງອາຫານໃຫ້ບໍ່ພຽງພໍ ຫຼື ອາຫານບໍ່ຖືກປາກຂອງນັກກິລາ, ປະເທດອື່ນໄດ້ຈັດອາຫານເພີ່ມໃຫ້ນັກກິລາຂອງຕົນຢູ່ນອກສະຖານທີ່ ພ້ອມທັງມີນັກວິທະຍາສາດການກິລາເບິ່ງແຍງນັກກິລາຮອບດ້ານ;
   ຄວນມີການພັດທະນາບຸກຄະລາກອນກິລາ ໂດຍສະເພາະຄູຝຶກກິລາແຕ່ລະປະເພດໃຫ້ມີການຂະຫຍາຍຕົວ ແລະ ຍົກລະດັບໃຫ້ໄດ້ມາດຕະຖານສາກົນ;
   ໃຫ້ມີການຈັດສັນງົບປະມານພັດທະນາບຸກຄະລາກອນ ແລະ ນັກກິລາໃຫ້ບັ້ນດາສະຫະພັນທີ່ມີຜົນງານ ເພື່ອໃຫ້ນັກກິລາທີ່ໄດ້ຫຼຽນຄຳ ຫຼື ເງິນ ຫຼື ນັກກິລາທີ່ເປັນປາຍແຫຼມເພື່ອຫວັງຫຼຽນໄດ້ຝຶກຊ້ອມຕະຫຼອດປີ;
   - ຄວນອະນຸມັດງົບປະມານຮັບໃຊ້ໃນການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນໃຫ້ມີໄລຍະເວລາດົນກວ່ານີ້.
2. <u>ສິ່ງທ້າທາຍ</u> :
   - ປັດຈຸບັນ ບັ້ນດາປະເທດໃນຂົງເຂດອາຊຽນໄດ້ລົງທຶນເພີ່ມພິເສດໃສ່ວຽກງານກິລາລະດັບສູງ ໂດຍສະເພາະ ກຳປູເຈຍ, ພະມ້າ, ບຸໄນ, ຕີມໍ ໄດ້ສົ່ງຄູຝຶກ ແລະ ນັກກິລາເພີ່ມຂຶ້ນຫຼາຍ, ນອກຈາກນີ້ການຈ້າງຄູຝຶກຈາກຕ່າງປະເທດ ແລະ ການນຳນັກກິລາທີ່ມີເຊື້ອສາຍຂອງປະເທດຕົນເອງມາແຂ່ງຂັນໃຫ້;

Scanned with CamScanner

ສະມັດຕະພາບຂອງນັກກິລາຂອງບັນປະເທດເພື່ອນບ້ານມີຄວາມແຂງແກ່ນຂຶ້ນ ບໍ່ວ່າດ້ານສະມັດຕະພາບ
ຮ່າງກາຍ, ເຕັກນິກ, ຍຸດທະວິທີ ພ້ອມນັ້ນຍັງໄດ້ນຳໃຊ້ຫຼັກການ ແລະ ເຄື່ອງມືທາງວິທະຍາສາດເພື່ອພັດທະນາ
ນັກກິລາຢ່າງເປັນຮຸບປະທຳ ແລະ ຫັນເປັນກິລາອາຊີບ;
ຍຸດທະສາດການຍາດແຍ່ງເອົາຫຼຽນມີຄວາມຫຼາກຫຼາຍ ແລະ ປ່ຽນແປງຕະຫຼອດເວລາ ໂດຍສະເພາະປະເທດ
ເຈົ້າພາບ.

ດັ່ງນັ້ນ, ກົມກິລາລະດັບສູງ ຈຶ່ງຂຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມະການໂອແລມປິກແຫ່ງຊາດລາວ ເພື່ອຊາບ ແລະ ຂໍທິດຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າກົມ

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ 692/ກສ
ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2019

ລາຍຊື່ນັກກິລາລາວທີ່ຍາດໄດ້ຫລຽນຈາກການເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 30 ຢູ່ປະເທດຟີລິບປິນ ແຕ່ວັນທີ 30/11/-12/12/ 2019

ລ/ດ	ປະເພດກິລາ Sports	ລາຍການແຂ່ງຂັນ Even name	ຊື່ ແລະ ນາມສະກຸນ	ປະເພດຫຼຽນ
I	**ຫຼຽນຄຳ 1 ຫຼຽນ**			
	ຄິກບ໊ອກຊິ່ງ	ຕໍ່ສູ້ ນ້ຳໜັກ - 60 Kg	ທ. ລຸກັນ ໄຕປັນເຢາວິງ	ຫຼຽນຄຳ
II	**ຫຼຽນເງິນ 5 ຫຼຽນ**			
1	ຢູໂດ	ຟ້ອນກະຕະຄຸ່ຍິງ Kata (F)	ນ. ມະນຸລີ ພານຸວົງ ນ. ພອນວັນ ສີອ່ຳພອນ	ຫຼຽນເງິນ
2	ຢູໂດ	ຟ້ອນກະຕະຄຸ່ຊາຍ Kata (M)	ທ. ຈັນດາວອນ ສີວັນວິໄລ ທ. ພິຊາດ ສີສະຫວາດ	ຫຼຽນເງິນ
3	ເປຕັ້ງ	ທີມຄຸ່ຍິງ Doubles (F)	ນ. ອາລີ ແສງຈັນເພັດ ນ. ເພັດສະໝອນ ພັນທະລີ	ຫຼຽນເງິນ
4	ມວຍລາວ	ຕໍ່ສູ້ ນ້ຳໜັກ 45 Kg	ທ. ລຸລິງໄຊ ສີງສະຫ້ວາດ	ຫຼຽນເງິນ
5	ລີດຖີບ	ຖ່ວຊາຍທາງໄກ Road event mass start individual	ທ. ອາລີຍາ ພຸມສະຫ້ວາດ	ຫຼຽນເງິນ
III	**ຫຼຽນທອງ 29 ຫຼຽນ**			
1	ຄິກບ໊ອກຊິ່ງ	ຕໍ່ສູ້ ນ້ຳໜັກ -50 Kg ຍິງ Full contact	ນ. ມາລາ ຈັນທະລິກສາ	ຫຼຽນທອງ
2	ຄິກບ໊ອກຊິ່ງ	ຕໍ່ສູ້ ນ້ຳໜັກ -51 Kg Full contact	ທ. ພັນ ເຈືອງວັນເຮືອງ	ຫຼຽນທອງ
3	ຄິກບ໊ອກຊິ່ງ	ຕໍ່ສູ້ ນ້ຳໜັກ -57 Kg Full contact	ທ. ໄພລັດ ທຳມະວົງສາ	ຫຼຽນທອງ
4	ຢູໂດ	ຕໍ່ສູ້ ນ້ຳໜັກ -81 Kg (Judo)	ທ.ຈິດຕະກອນ ໄຊຍະສານ	ຫຼຽນທອງ

Scanned with CamScanner

5	ເປຕ້ຽ	ທ້ຽມຄູ່ຊາຍ Doubles (M)	ທ. ພຸດທະລາ ແກ້ວກ້ານນ້ຽກ ທ. ສຸພະກອນ ລັດຕະນະບົວວົງ	ຫຼຽນທອງ
6	ເປຕ້ຽ	ທ້ຽມຊຸດ ຍິງ Triples (F)	ນ. ດຸນ ສຸກາສະຫວັດ ນ. ມະນີວັນ ສີສັນທາ ນ. ໃບວິໄລ ເທບພະກັນ ນ. ຈັນສະໝອນ ອິງສະຫ້ວດ	ຫຼຽນທອງ
7	ເປຕ້ຽ	ທ້ຽມຊຸດຊາຍ Triples (M)	ທ. ສຸລິຍັດ ດຳວົງສາ ທ. ດຳຟັນ ແສງແກ້ວ ທ. ຈັນທະພອນ ແກ້ວມະນີວົງ ທ. ວົງພະຈັນ ລັດຕະນະດວຈິດ	ຫຼຽນທອງ
8	ມວຍລາວ	ຕໍ່ສູ້ ນ້ຳໜັກ -57 Kg ຊາຍ	ທ. ໄກ່ ເກດນຸວົງ	ຫຼຽນທອງ
9	ມວຍລາວ	ຕໍ່ສູ້ ນ້ຳໜັກ -45 Kg ຍິງ	ນ. ພຸດທະສອນ ແກ້ວໄຊຍະວົງ	ຫຼຽນທອງ
10	ປັນຈັກສິລັດ	ຟ້ອນຄູ່ຊາຍ Sent ganda (doubles)	ທ. ອຳພົນ ຊຸນຈະເລີນ ທ. ອາລີລັກ ວົງສຸວົງ	ຫຼຽນທອງ
11	ປັນຈັກສິລັດ	ຕໍ່ສູ້ ນ້ຳໜັກ 45 – 50 Kg Tanding class. A (45 – 50 Kg)	ທ. ທະນາພົນ ລົມພິລາວົງ	ຫຼຽນທອງ
12	ປັນຈັກສິລັດ	ຕໍ່ສູ້ ນ້ຳໜັກ 50 - 55 Kg Tending class. B	ນ. ອໍລະໄທ ສຸນທະວົງ	ຫຼຽນທອງ
13	ວູຊູ	ຕໍ່ສູ້ ນ້ຳໜັກ 52 Kg ຊາຍ Sanda 52 kg	ທ. ຄາວີ ພົມມະຂົນທອງ	ຫຼຽນທອງ
14	ວູຊູ	ຕໍ່ສູ້ ນ້ຳໜັກ 60 Kg ຊາຍ Sanda 60 kg	ທ. ໜຸ່ຄິດ ລາດສະເພົາ	ຫຼຽນທອງ
15	ວູຊູ	ຕໍ່ສູ້ ນ້ຳໜັກ 48 Kg ຍິງ Sanda 48 kg	ນ. ລາຕີ ແກ້ວຫຸມແພງ	ຫຼຽນທອງ
16	ມວຍປ້ຳ	ຕໍ່ສູ້ ນ້ຳໜັກ 72 Kg ຊາຍ Greco roman	ທ. ແສງສະຫວ່ອນ ພະຈັນໄຊ	ຫຼຽນທອງ
17	ມວຍປ້ຳ	ຕໍ່ສູ້ ນ້ຳໜັກ 50 Kg ຍິງ Wrestling	ນ. ມະນີວັນ ອິນທະລາ	ຫຼຽນທອງ
18	ມວຍປ້ຳ	ຕໍ່ສູ້ ນ້ຳໜັກ 125Kg Freestyle	ທ. ໄຊສົມບຸນ ເພັດສຸພັນ	ຫຼຽນທອງ

Scanned with CamScanner

19	ກະຕໍ້	ຊຸດທີມຍິງ Hoop event	ນ. ກ້ອຍ ໄຊຍະວົງ ນ. ນໍ້ຄຳ ວົງໄຊ ນ. ສອນສະຫ້ວນ ແກ້ວສຸລິຍາ ນ. ພິລາວັນ ຈັນທະສີລີ ນ. ສັນຕິສຸກ ຈັນດາລາ ນ. ດຳດວນ ລັດຕະນະວົງສາ	ຫຼວງນ້ຳທາ
20	ກະຕໍ້	ຊຸດທີມຊາຍ Hoop event	ທ. ໂປ ມາໂສພາ ທ. ໜຸ່ມ ສຸວັນນະດີ ທ. ສະວິເດັນ ວໍລະວົງສາ ທ. ສົມມະນີວັນ ພະກອນດຳ ທ. ໂຍທິນ ສົມບັດພູທອນ ທ. ພິດທະລັນ ບຸນປະເສີດ	ຫຼວງນ້ຳທາ
21	ເທຄ້ອນໂດ	ຕໍ່ສູ້ ນ້ຳໜັກ 68 Kg ຍິງ - Under 68 Kg (Welter)	ນ. ສອນສະຫວັນ ສີລິມະໂນທຳ	ຫຼວງນ້ຳທາ
22	ເທຄ້ອນໂດ	ຕໍ່ສູ້ ນ້ຳໜັກ 68 Kg ຊາຍ - Under 68 Kg (Welter)	ທ. ສົມສະໜຸກ ພົມມະວັນ	ຫຼວງນ້ຳທາ
23	ກາຣາເຕໂດ	ຟ້ອນກະຕະດຽວ ຊາຍ Individual (kata)	ທ. ອຳຄາ ວົງພະຈັນ	ຫຼວງນ້ຳທາ
24	ກາຣາເຕໂດ	ຕໍ່ສູ້ນ້ຳໜັກ 60 Kg Kumite	ທ. ສາລັນ ມະນີວັນ	ຫຼວງນ້ຳທາ
25	ຜ່ານສິ່ງກີດຂວາງ	ຜ່ານສິ່ງກີດຂວາງ Individual 50 Km Obstacle	ນ. ຄຳຫຼ້າ ສໍວິມານ	ຫຼວງນ້ຳທາ
26	ຜ່ານສິ່ງກີດຂວາງ	ຜ່ານສິ່ງກີດຂວາງ ຊຸດທີມປະສົມ 400 m x 12 Obstacle course - mixed team relay	ນ. ສຸກສະຫວຽນ ແກ້ວດວງດີ ທ. ຣທ ບຸນເພັງ ພົມມະສອນ ທ. ຣທ ສົນນະຄອນ ໄຊຍະລາດ ນ. ຄຳຫຼ້າ ສໍວິມານ	ຫຼວງນ້ຳທາ
27	ແລ່ນ - ລານ	ແລ່ນຂ້າມຮົ້ວ 110 m 110 M hurdles	ທ. ອານຸສອນ ໄຊສາ	ຫຼວງນ້ຳທາ
28	ສະໜຸກເກີ	ດຽ່ວຊາຍ Snooker singles	ທ. ສິດທິເດດ ສັກບ່ຽງ	ຫຼວງນ້ຳທາ
29	ຊອບເທັນນິດ	ຄູ່ປະສົມ ຍິງ - ຊາຍ Doubles	ທ. ອາລິຍາ ມະນີພອນ ນ. ພອນສະໄໝ ຈຳປາມະນີວົງ	ຫຼວງນ້ຳທາ

ຫົວໜ້າກົມ

ແສງພອນ ພົນອາພາຄຳ

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ 699 /ກສ
ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2019

ສະຫຼຸບຫຼຽນການເຂົ້າຮ່ວມແຂ່ງຂັນກິລາຊີເຫມດຄັ້ງທີ 30 ປີ 2019 ຂອງນັກກິລາລາວ ຢູ່ປະເທດ ຟີລິປິນ ແຕ່ວັນທີ 30/11/-12/12/2019

ລ/ດ	ປະເພດກິລາທີ່ໄດ້ຫຼຽນ		ຫຼຽນຄຳ	ຫຼຽນເງິນ	ຫຼຽນທອງ	ລວມ
1	ຄິກບ໋ອກຊິ່ງ	Kickboxing	1	0	3	4
2	ຢຸໂດ	Judo	0	2	1	3
3	ເປຕ້ັງ	Petanque	0	1	3	4
4	ມວຍລາວ	Muar	0	1	2	3
5	ລີດຖີບ	Cycling	0	1	0	1
6	ປ້ັນຈັກສີລັດ	Pencak Silat	0	0	3	3
7	ວູຊູ	Wushu	0	0	3	3
8	ມວຍປ້ຳ	Wrestling	0	0	3	3
9	ກະຕໍ້	Sepak Takraw	0	0	2	2
10	ເທຄວັນໂດ	Taekwondo	0	0	2	2
11	ກາຣາເຕໂດ	Karate do	0	0	2	2
12	ຜ່ານສິ່ງກີດຂວາງ	Obstacle Course	0	0	2	2
13	ແລ່ນ-ລານ	Athletics	0	0	1	1
14	ບີລຽດ-ສະນຸກເກ໋ີ	Billiard Sports	0	0	1	1
15	ຊອບເທ້ັນນິດ	Soft Tennis	0	0	1	1
16	ສະຫຼຸບຈຳນວນຫຼຽນທັ້ງໝົດ		1	5	29	35

ຫົວໜ້າກົມ

ສຸທັດ ພົນຄຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບຊາດ

ເລກທີ 700 /ກລ
ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2019

ລະຫຼຸບຫຼຽນການແຂ່ງຂັນກິລາຊີເຄມຄັ້ງທີ 30 ປີ 2019
ປະເທດ ຟີລິບປິນ ແຕ່ວັນທີ 30/11-12/12/ 2019

COUNTRY	GOLD	SILVER	BRONZE	TOTAL
PHILIPPINES	149	117	121	387
VIETNAM	98	85	105	288
THAILAND	92	103	123	318
INDONESIA	72	84	111	267
MALAYSIA	55	53	71	184
SINGAPORE	53	46	68	167
MYANMAR	4	18	51	73
CAMBODIA	4	6	36	46
BRUNEI DARUSSALAM	2	5	6	13
LAO PDR	1	5	29	35
TIMOR-LESTE	0	1	5	6

ຫົວໜ້າກົມ

ແສງພອນ ພົນທາມາດ

Scanned with CamScanner